# ຈົດໝາຍຂ່າວ

ມິນາ 2023

ສະບັບທີ #5

ຈົດໝາຍຂ່າວປະຈຳໄຕມາດກ່ຽວກັບການຄົ້ນຄວ້າ ທາງດ້ານໂພຊະນາການ ໃນ ສປປ ລາວ

ເນື້ອໃນ:

—

ປະຫວັດຜູ້ໄດ້ຮັບທຶນຄົ້ນຄວ້າ ທ່ານ ໄມໂຄ ວົງໄຊ ສພກ

—

ວາລະດ້ານໂພຊະນາການ ກຳລັງ ດຳເນີນ ແລະ ຄາດວ່າຈະບັນລຸ

—

ຮຽນຮູ້ກ່ຽວກັບໂພຊະນາການ ຜ່ານສື່ອອນໄລ




*ພະນະທ່ານ ສຈ. ປອ. ກິແກ້ວ ໄຊຄຳພິທູນ ປະທານກອງປະຊຸມຄະນະກຳມະການແຫ່ງຊາດ ຮ່ວມກັບຄູ່ຮ່ວມພັດທະນາ ກຳລັງຢ້ຽມຢາມບູ໊ດວາງສະແດງ ຂອງໂຄງການ ANRCB, ອົງການ CRS*

## ກອງປະຊຸມແຫ່ງຊາດດ້ານໂພຊະນາການ ຄັ້ງທີ VIII ປະຈຳປີ 2023:

## *"ໂພຊະນາການ ເພື່ອການພັດທະນາແບບຍືນຍົງ"*

ກອງປະຊຸມແຫ່ງຊາດດ້ານໂພຊະນາການຄັ້ງທີ VIII ແລະ ກອງປະຊຸມຄະນະກຳມະການແຫ່ງຊາດດ້ານໂພຊະນາການ ປະຈຳປີ 2022 ໄດ້ຈັດຂຶ້ນວັນທີ 21 ກຸມພາ 2023 ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ໄດ້ຮັບກຽດການເປັນປະທານໂດຍ ພະນະທ່ານ ສຈ. ປອ. ກິແກ້ວ ໄຊຄຳພິທູນ ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ປະທານຄະນະກຳມະການແຫ່ງຊາດດ້ານໂພຊະນາການ .

ກອງປະຊຸມຄັ້ງທີ 8 ແມ່ນໄດ້ນຳສະເໜີໂດຍ ຄະນະກຳມະການແຫ່ງຊາດດ້ານໂພຊະນາການ ແລະ ແນໃສ່ສະຫຼຸບບົດຮຽນ ຈາກຄວາມຄືບໜ້າໃນການປະຕິບັດຍຸດທະສາດແຫ່ງຊາດດ້ານໂພຊະນາການ ໃນປີຜ່ານມາ ໄດ້ຮັບຟັງຄຳເຫັນຈາກແຕ່ລະແຂວງ ເຊັ່ນດຽວກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງກະສິກຳ ແລະ ປ່າໄມ້, ແຕ່ລະອົງການຈັດຕັ້ງມະຫາຊົນ, ມະຫາວິທະຍາໄລວິທະຍາສາດສຸຂະພາບ, ແລະ ຄູ່ຮ່ວມພັດທະນາ. ປີນີ້, ຫົວຂໍ້ແມ່ນ "ໂພຊະນາການ ເພື່ອການພັດທະນາແບບຍືນຍົງ" ແລະຄວາມຍືນຍົງແມ່ນຈຸດໃຈກາງ ຂອງການສົນທະນາກ່ຽວກັບ ວິທີການສືບຕໍ່ຄວາມຄືບໜ້າໃນ ປີ 2023. ກອງປະຊຸມດັ່ງກ່າວລວມມີການວາງສະແດງ ກ່ຽວກັບ ການຈັດຕັ້ງປະຕິບັດ, ເຄື່ອງມື ແລະ ສິ່ງພິມໃຫມ່ຈາກຫຼາຍຂະແໜງການ ໂດຍເນັ້ນຫນັກໃສ່ການຈັດຕັ້ງປະຕິບັດແບບຍືນຍົງໃນລະດັບທ້ອງຖິ່ນ.

ປະທານກອງປະຊຸມໄດ້ກ່າວວ່າ ພວກເຮົາທຸກຄົນມີບົດບາດສຳຄັນໃນການຊ່ວຍຫຼຸດຜ່ອນການຂາດສານອາຫານໃນ ສປປ ລາວ. ເພື່ອບັນລຸເປົ້າໝາຍນີ້, ພວກເຮົາຍັງພົບພໍ້ກັບສິ່ງທ້າທາຍຫຼາຍຢ່າງ ພວກເຮົາຕ້ອງຮ່ວມກັນເພື່ອເຮັດໃຫ້ສະຖານະການດີຂຶ້ນ. ພວກເຮົາຕ້ອງເພີ່ມທະວີການຮ່ວມມືດ້ານການວາງແຜນການໃນປີ 2023 ເພື່ອຮັບປະກັນໃຫ້ແຕ່ລະຂະແໜງການ ແລະ ແຂວງເພີ່ມຄວາມເອົາໃຈໃສ່ໃນການແກ້ໄຂບັນຫາທາງດ້ານໂພຊະນາການ ແລະ ໃຫ້ເອົາເຂົ້າໃນແຜນການພັດທະນາ 5 ປີຄັ້ງທີ 9 ແລະ ແຜນຈັດຕັ້ງປະຕິບັດປະຈຳປີ.

*ເອກະສານ ກ່ຽວກັບກອງປະຊຸມ ທັງໝົດສາມາດເຂົ້າໄປເບິ່ງໄດ້ທີ່:* bit.ly/405aIHY

ຮ່ວມງານກັບ
Partnering with:

ສະໜັບສະໜູນທຶນໂຄງການໂດຍ
Funded by:

ຈັດຕັ້ງປະຕິບັດໂຄງການໂດຍ
Implemented by:

ໃຫ້ການຊ່ວຍເຫຼືອທາງດ້ານວິຊາການໂດຍ
Technical Support by:

ຮ່ວມງານກັນເປັນເຄືອຄ່າຍ
Working together
as the consortium:

## ກອງປະຊຸມ ການພັດທະນາວາລະການຄົ້ນຄວ້າແຫ່ງຊາດດ້ານໂພຊະນາການ ຮອບທີ 1



ພວກເຮົາຍັງຕ້ອງໄດ້ຄົ້ນຄວ້າ ແລະ ຮຽນຮູ້ອັນໃດແດ່ ເພື່ອປັບປຸງໂພຊະນາການ ໃນ ສປປ ລາວ ຢ່າງມີປະສິດທິພາບ? ນັ້ນແມ່ນຄໍາຖາມທີ່ ວາລະການຄົ້ນຄວ້າແຫ່ງຊາດ ດ້ານໂພຊະນາການ (NNRA) ຊອກຫາຄໍາຕອບ.

ປະຈຸບັນຢູ່ ສປປ ລາວ, ວາລະການຄົ້ນຄວ້າແຫ່ງຊາດດ້ານໂພຊະນາການ ກໍາລັງກະກຽມຜ່ານຂະບວນການ ສໍາພາດ ແລະ ສົນທະນາກັບພາກສ່ວນທີ່ກ່ຽວຂ້ອງຈາກຫຼາຍຂະແໜງການ. ວັນທີ 2 ກຸມພາ 2023, ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ (ສສກ) ໄດ້ນໍາສະເໜີ ແລະ ປຶກສາຫາລືກ່ຽວກັບຜົນການຄົ້ນຄວ້າການຄົ້ນຄວ້າໄລຍະ ເບື້ອງຕົ້ນ. ໄດ້ມີຂໍ້ສະເໜີແນະໃຫ້ແກ່ການພັດທະນາເຄື່ອງມືເພື່ອເປັນທິດທາງໃນການນໍາໃຊ້ສ້າງເຄື່ອງມືການຄົ້ນຄວ້າໄລຍະທີ 2 ໂດຍມີຜູ້ເຂົ້າຮ່ວມຈາກຫຼາຍຂະແໜງການທີ່ສໍາຄັນ. ກອງປະຊຸມຄັ້ງນີ້ ໄດ້ຮັບກຽດເປັນປະທານໂດຍ ທ່ານ ປທ. ດຣ. ລັດສະໝີ ສຽງສູນທອນ ຫົວໜ້າ ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ (ສສກ), ກອງປະຊຸມ ການພັດທະນາ ວາລະການຄົ້ນຄວ້າດ້ານໂພຊະນາການໃນຄັ້ງນີ້ ແມ່ນ ນໍາສະເໜີໂດຍ ທ່ານ ດຣ. ສົມພອນ ສຸຂະວົງ ເຊິ່ງເປັນນັກຄົ້ນຄວ້າຫຼັກ, ພະແນກຄົ້ນຄວ້າອາຫານ ແລະ ໂພຊະນາການ, ສສກ. ການພັດທະນາ ວະລະການຄົ້ນຄວ້າແຫ່ງຊາດ ດ້ານໂພຊະນາການຄາດວ່າຈະສໍາເລັດພາຍໃນທ້າຍປີ 2023.

## ການຮຽນຮູ້ໂພຊະນາການຜ່ານສື່ອອນໄລ

ແຫຼ່ງການສຶກສາດ້ວຍຕົນເອງແບບໃໝ່ ສໍາລັບມືອາຊີບ ເປີດໃຫ້ນໍາໃຊ້ແລ້ວ ໂດຍບໍ່ເສຍຄ່າ ແລະ ເປັນພາສາລາວ! ນີ້ແມ່ນໂມດູນສໍາລັບນັກສຶກສາມະຫາວິທະຍາໄລ, ນໍາສະເໜີ ແນວຄວາມຄິດພື້ນຖານທາງດ້ານໂພຊະນາການ, ລວມທັງ: ໂພຊະນາການ ແລະ ການກໍານົດທາງດ້ານໂພຊະນາການ, ສານອາຫານທີ່ມີຢູ່ໃນອາຫານ, ສານອາຫານທີ່ມີຢູ່ໃນອາຫານ, ໂພຊະນາການຊ່ວງໄລຍະວົງຈອນຂອງຊີວິດ ໄວໜຸ່ມ ຜູ້ໃຫຍ່ ຜູ້ສູງອາຍຸ, ການຄໍ້າປະກັນສະບຽງອາຫານ ແລະ ລະບົບອາຫານ, ການປະເມີນທາງດ້ານໂພຊະນາການ: ວິທີທາງກົງ ແລະ ທາງອ້ອມ, ພະຍາດຕິດຕໍ່ ແລະ ບໍ່ຕິດຕໍ່ທີ່ພົວພັນກັບໂພຊະນາການ.

ຫຼັກສູດນີ້ໄດ້ເຮັດໃນຮູບແບບວິດີໂອ ຢູ່ໃນຊ່ອງ YouTube ANRCB - ດັ່ງນັ້ນທ່ານສາມາດເບິ່ງການບັນຍາຍພາສາລາວ ພ້ອມກັບສະໄລ້ພາສາລາວ. ການນໍາສະເໜີຍັງມີໃຫ້ດາວໂຫຼດເປັນພາສາອັງກິດ ໃຫ້ທຸກຄົນສາມາດນໍາໃຊ້ເພື່ອປັບປຸງທັກສະພາສາອັງກິດ ທີ່ກ່ຽວຂ້ອງກັບໂພຊະນາການ.

ນັກສຶກສາມະຫາວິທະຍາໄລ, ພະນັກງານພັດທະນາຊຸມຊົນ, ແລະ ພະນັກງານສາທາລະນະສຸກທຸກທ່ານ ສາມາດໄດ້ຮັບຜົນປະໂຫຍດຈາກການເຂົ້າຮຽນຫຼັກສູດນີ້. ໂຄງການ ANRCB ຫວັງວ່າອຸປະກອນເຫຼົ່ານີ້ຈະປະກອບສ່ວນເຂົ້າໃນການພັດທະນາການສຶກສາທາງດ້ານໂພຊະນາການ ແລະ ການປູກຈິດສໍານຶກໃນສປປ ລາວ ແລະ ຕ່າງປະເທດ.




***ສາມາດເລີ່ມຮຽນໄດ້ທີ່: tinyurl.com/yu8we869***




## ກອງປະຊຸມເຜີຍແຜ່ປະຈໍາປີ ຄັ້ງທີ 4 ໂຄງການສ້າງຖານຂໍ້ມູນຂ່າວສານແຫ່ງຊາດດ້ານໂພຊະນາການ (NIPN)

ກອງປະຊຸມເຜີຍແຜ່ປະຈໍາປີ ຄັ້ງທີ 4 ໂຄງການສ້າງຖານຂໍ້ມູນຂ່າວສານແຫ່ງຊາດດ້ານໂພຊະນາການ (NIPN) ໄດ້ຈັດຂຶ້ນວັນທີ 20 ກຸມພາ 2023 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ໄດ້ຮັບກຽດການເປັນປະທານໂດຍ ພະນະທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ, ຄະນະຮັບຜິດຊອບຊີ້ນໍາລວມໂຄງການ NIPN.

ກອງປະຊຸມໄດ້ສະແດງໃຫ້ເຫັນຂໍ້ມູນໃໝ່ ແລະ ການວິເຄາະຂໍ້ມູນດ້ານໂພຊະນາການ ແລະ ລວມທັງ ການຂັບເຄື່ອນການເລືອກອາຫານ ແລະ ສະພາບແວດລ້ອມ ຂອງອາຫານ ຂອງເດັກນ້ອຍຊັ້ນປະຖົມໃນ ສປປ ລາວ ແລະ ຟີລິປິນ, ຄວາມສໍາພັນລະຫວ່າງການບໍລິໂພກອາຫານທີ່ຫຼາກຫຼາຍ ຂອງແມ່ ແລະ ການຂາດອາຫານຊໍາເຮື້ອ (ລວງສູງບໍ່ໄດ້ມາດຕະຖານ) ຂອງເດັກນ້ອຍອາຍຸລຸ່ມ 5 ປີ, ຄວາມສໍາພັນລະຫວ່າງການລ້ຽງດູເດັກນ້ອຍ ແລະ ສະຖານະພາບໂພຊະນາການ ຂອງ ເດັກອາຍຸ 6-23 ເດືອນ ໃນ ສປປ ລາວ, ແລະ ຂໍ້ມູນລະບົບອາຫານໃນ ສປປ ລາວ.

**ເອກະສານທັງໝົດຂອງກອງປະຊຸມ ສາມາດດາວໂຫຼດໄດ້ທີ່:**
***tinyurl.com/nipnday2023***

# ການປະເມີນລະບົບອາຫານໃນ ສປປ ລາວ: ຄຳຖາມຄວາມຍືນຍົງກ່ຽວກັບອັດຕາ ການຂາດສານອາຫານສູງໃນເດັກນ້ອຍ ແລະ ແມ່ຍິງໄວຈະເລີນພັນ



ໃນກອງປະຊຸມໂຄງການ NIPN ດຣ.ໄສວິເສນ ບູລົມ ມະຫາວິທະຍາໄລແຫ່ງຊາດ ໄດ້ນຳສະເໜີຜົນໄດ້ຮັບໃໝ່ທີ່ເໜັ້ນໜັກໃສ່ທາງດ້ານໂພຊະນາການຂອງລະບົບອາຫານໃນ ສປປ ລາວທີ່ພັດທະນາຂຶ້ນໃນປະຈຸບັນໂດຍ ອີງການ ອາຫານ ແລະ ການກະເສດ, ສະຫະພາບເອລົບ ແລະ ສູນຄົ້ນຄວ້າທາງດ້ານກະສິກຳເພື່ອການພັດທະນາສາກົນຂອງປະເທດຝຣັ່ງ.

ການປະເມີນໄດ້ວັດແທກຄວາມສຳພັນລະຫວ່າງການຂັບເຄື່ອນດ້ານໂພຊະນາການ, ຜົນກະທົບ ແລະ ບັນຫາຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ອັດຕາການຂາດສານອາຫານ. ບາງບັນຫາທີ່ໄດ້ຍົກຂຶ້ນມາ ລວມມີ:

- ການຈຳກັດທາງດ້ານຄວາມຮູ້, ການເຂົ້າເຖິງເຕັກໂນໂລຢີຢູ່ໃນຊຸມຊົນຫ່າງໄກສອກຫຼີກ, ແລະ ຄວາມບໍ່ຍືນຍົງໃນການນຳໃຊ້ທີ່ດິນ ບວກກັບການຂາດການສົ່ງເສີມກະສິກຳ ສິ່ງຜົນໃຫ້ມີການນຳໃຊ້ນະວັດຕະກຳຕ່ຳ ແລະ ການເຮັດໄຮ່ ເພື່ອການລ້ຽງຊີບຍັງຄົງຢູ່, ເຊິ່ງເຮັດໃຫ້ເປັນສາຍຂາດແຄນເຂົ້າກິນຢ່າງຕໍ່ເນື່ອງ.
- ການປ່ຽນແປງສະພາບດິນຟ້າອາກາດ, ການຂາດເຄືອຂ່າຍການຂົນສົ່ງ, ແລະ ການຕັດໄມ້ທຳລາຍປ່າ ສິ່ງຜົນສຳຄັນຕໍ່ລາຄາທີ່ເພີ່ມສູງຂຶ້ນ ຂອງສິນຄ້າທີ່ມາຈາກການເຮັດກະສິກຳ, ການຂາດການເຂົ້າເຖິງຕະຫຼາດ ແລະ ການຫຼຸດລົງຢ່າງຫຼວງຫຼາຍ ຂອງ ການເຂົ້າເຖິງ ແລະ ການເກັບຮັກສາອາຫານປ່າ ແລະ ຜະລິດຕະພັນຈາກປ່າທີ່ບໍ່ແມ່ນໄມ້, ການສູນເສຍຊັບພະຍາກອນນີ້ ແມ່ນເຮັດໃຫ້ຄວາມຫຼາກຫຼາຍຂອງອາຫານຫຼຸດລົງ.
- ການຫວ່າງງານ ແລະ ການມີສ່ວນຮ່ວມຂອງກຳລັງແຮງງານຕ່ຳ ຢູ່ໃນເຂດຊົນນະບົດ ເປັນປັດໄຈເຮັດໃຫ້ຄອບຄົວມີລາຍຮັບທີ່ຈຳກັດ ໃນການຊື້ອາຫານທີ່ມີໂພຊະນາການ ເຊິ່ງເຮັດໃຫ້ການໄດ້ກິນອາຫານທີ່ຫຼາກຫຼາຍຫຼຸດລົງ.
- ໃນຊຸມຊົນ ແລະ ຊົນນະບົດບາງແຫ່ງ ມີປະເພນີ ທີ່ຖືກປະຕິບັດເປັນປົກກະຕິ ເຊັ່ນ ການຄະລຳອາຫານ ແລະ ການຈຳກັດການກິນອາຫານ, ແລະ ສິ່ງເຫຼົ່ານີ້ເປັນຜົນກະທົບໂດຍກົງຕໍ່ກັບຄວາມຫຼາກຫຼາຍທາງດ້ານອາຫານ.
- ການປະເມີນພົບສິ່ງທີ່ເຮັດໃຫ້ໜ້າເປັນຫ່ວງ ໂດຍພົບວ່າອາຫານທີ່ມີຄຸນຄ່າທາງດ້ານໂພຊະນາການຕ່ຳເອີ້ນວ່າ "ອາຫານຂີ້ເຫຍື້ອ" ແມ່ນມີຂາຍຫຼາຍຂຶ້ນ ແລະ ມີການບໍລິໂພກອາຫານທີ່ບໍ່ດີຕໍ່ສຸຂະພາບເພີ່ມຂຶ້ນ. ສິ່ງດັ່ງກ່າວເປັນສາເຫດທີ່ບໍ່ດີຕໍ່ປະລິມານສານອາຫານອ້າງອີງປະຈຳວັນ

ດຣ. ໄສວິເສນ ບູລົມ, ໄດ້ອະທິບາຍເຖິງການສະເໜີ ຂອງບຸກຄະລາກອນທີ່ເປັນລະບົບ ເພື່ອຮັບມືກັບສິ່ງທ້າທາຍດັ່ງກ່າວ ແມ່ນເພື່ອສົ່ງເສີມການສຶກສາດ້ານໂພຊະນາການ ການປູກຈິດສຳນຶກ ແລະ ການແບ່ງປັນຂໍ້ມູນຂ່າວສານເພື່ອປັບປຸງພຶດຕິກຳການບໍລິໂພກອາຫານ ແລະ ສົ່ງເສີມອາຫານທ້ອງຖິ່ນ, ອາຫານພື້ນເມືອງ ແລະ ອາຫານທີ່ມີຄຸນຄ່າດ້ານໂພຊະນາການ.

## ປະຫວັດ ຂອງ ຜູ້ໄດ້ຮັບທຶນຄົ້ນຄວ້າ



ທ່ານ ໄມໂຄ ວົງໄຊ, ແມ່ນພະນັກງານວິຊາການ, ພະແນກບໍລິຫານ ແລະ ການວາງແຜນ, ສູນໂພຊະນາການ (CN). ລາວຈົບປະລິນຍາໂທດ້ານສາທາລະນະສຸກ ແລະ ເປັນຫົວໜ້າທີມທີ່ໄດ້ຮັບທຶນຄົ້ນຄວ້າຂະໜາດນ້ອຍຈາກການສະໜັບສະໜູນຈາກ USAID ໃນຫົວຂໍ້ "ປັດໃຈທີ່ກ່ຽວຂ້ອງກັບປະສິດທິພາບ ໃນການປົກປ້ອງ, ການສົ່ງເສີມ ແລະ ອັດຕາການລ້ຽງລູກດ້ວຍນົມແມ່ ໃນແຂວງວຽງຈັນ". ສ່ວນຕົວລາວເອງແມ່ນໄດ້ເຮັດການຄົ້ນຄວ້າຫຼາຍກວ່າ 20 ບົດ ແລະ ມີປະສົບການ ໃນການສຳພາດຕົວຕໍ່ໜ້າ ດ້ວຍໂຄງຮ່າງແບບສອບຖາມ. ເພື່ອຕອບຄຳຖາມການຄົ້ນຄວ້ານີ້ ທີມງານຂອງລາວ ໄດ້ຖືກສະໜັບສະໜູນໂດຍ ທ່ານ ໂຣເຈີ ເອສ ໂຊ ຮອງສາດສະດາຈານກົມລະບາດວິທະຍາ ແລະ ຊີວະສະຖິຕິ, ສາທາລະນະສຸກ, ມະຫາວິທະຍາໄລອິນເດຍນາ (ສະຫະລັດອາເມລິກາ), ສ້າງແບບສອບຖາມ ແລະ ເຮັດວຽກກັບຜູ້ຊ່ຽວຊານດ້ານການລ້ຽງລູກດ້ວຍນົມແມ່ ເພື່ອຮັບປະກັນການນຳໃຊ້ທີ່ເໝາະສົມ. ຕອນນີ້ທີມງານກຳລັງກະກຽມເພື່ອນຳໃຊ້ຊອບແວ STATA ເພື່ອປ້ອນ ແລະ ວິເຄາະຂໍ້ມູນ.

ທ່ານ ໄມໂຄ ອະທິບາຍວ່າ ລາວເປັນຄົນໜຶ່ງມີຄວາມໜ້າສົນໃຈ ກ່ຽວກັບການລ້ຽງລູກດ້ວຍນົມແມ່ ໃນເດັກນ້ອຍເພາະວ່າ ເປັນບູລິມະສິດໜຶ່ງ ຂອງ ມາດຕະການ ແກ້ໄຂທາງດ້ານໂພຊະນາການ ໂດຍກົງໃນແຜນປະຕິບັດງານແຫ່ງຊາດ ດ້ານໂພຊະນາການ . ຊຶ່ງສາມາດສະໜັບສະໜູນ ການຫຼຸດຜ່ອນ ການຂາດສານອາຫານ ແລະ ປັບປຸງສະພາບໂພຊະນາການ ຂອງເດັກອ່ອນ ແລະ ເດັກນ້ອຍໃນປະເທດ ໂດຍສະເພາະວິກິດການ COVID 19 ໄດ້ນຳເອົາສິ່ງທ້າທາຍອັນໃໝ່ ແລະ ຂັດຂວາງການເຂົ້າເຖິງການບໍລິການດ້ານສຸຂະພາບ ລວມທັງການເບິ່ງແຍງເດັກ (ANC) ແລະ ການໃຫ້ຄຳປຶກສາ ລະຫວ່າງບຸກຄົນກ່ຽວກັບການປ້ອນອາຫານເດັກອ່ອນ (IYCF)."

ທ່ານ ໄມໂຄ ອະທິບາຍວ່າ ລາວເຂົ້າຮ່ວມການຄົ້ນຄວ້າ ໂດຍໄດ້ຮັບທຶນຊ່ວຍເຫຼືອລ້າ ພ້ອມທັງໄດ້ຮັບຄຳປຶກສາຈາກຜູ້ໃຫ້ຄຳແນະນຳ ເຮັດໃຫ້ລາວເອງ "ໄດ້ຮຽນຮູ້ເພີ່ມຕື່ມກ່ຽວກັບການອອກແບບຄຳຖາມຄົ້ນຄວ້າ ແລະ ຂະບວນການຄັດເລືອກວິທີການຄົ້ນຄວ້າ" ຈາກຜູ້ໃຫ້ຄຳແນະນຳຂອງລາວ. ທ່ານໄມໂຄໄດ້ລາຍງານວ່າ ການລິເລີ່ມການຄົ້ນຄວ້ານີ້ແມ່ນຊ່ວຍສ້າງຂີດຄວາມສາມາດໃຫ້ແກ່ພະນັກງານ ຂອງສູນໂພຊະນາການ ໂດຍການນຳໃຊ້ຄວາມຮູ້ໃໝ່ເພື່ອປັບປຸງທັກສະດ້ານການຄົ້ນຄວ້າຂອງເຂົາເຈົ້າ.




## ກອງປະຊຸມທີ່ກຳລັງຈະເກີດຂຶ້ນ:

### ກອງປະຊຸມສາກົນດ້ານສາທາລະນະສຸກ ໃນບັນດາປະເທດພາກພື້ນລຸ່ມແມ່ນ້ຳຂອງ [GMS] ຄັ້ງທີ 13 ໃນປີ 2023

*ໃນຫົວຂໍ້:*

*"ການຍົກລະດັບຄວາມຮ່ວມມືຫຼາຍຂະແໜງການໃນດ້ານການສຶກສາ ແລະ ການຄົ້ນຄວ້າ ເພື່ອແກ້ໄຂບັນຫາສາທາລະນະສຸກທີ່ເປັນບູລິມະສິດໃນຍຸກໃໝ່."*

ເຄືອຂ່າຍທາງດ້ານວິຊາການຂົງເຂດ ສາທາລະນະສຸກໃນບັນດາປະເທດພາກພື້ນລຸ່ມແມ່ນ້ຳຂອງ (GMS) ໄດ້ເລີ່ມສ້າງຕັ້ງຂຶ້ນມາແຕ່ປີ 2008. ມີສະມາຊິກຈາກສະຖາບັນວິຊາການສາທາລະນະສຸກຂອງ 6 ປະເທດໃນພາກພື້ນລຸ່ມແມ່ນ້ຳຂອງຄື: ໄທ, ຫວຽດນາມ, ຈີນ, ກຳປູເຈຍ, ສປປ ລາວ ແລະ ມຽນມາ. ກອງປະຊຸມສາກົນດ້ານສາທາລະນະສຸກໃນບັນດາປະເທດພາກພື້ນລຸ່ມແມ່ນ້ຳຂອງ ຄັ້ງທີ 13 ນີ້ຈະໄດ້ຈັດ ຂຶ້ນຢູ່ຄະນະສາທາລະນະສຸກ ມະຫາວິທະຍາໄລການແພດ ແລະ ການຢາ ເຫ້ວ (ນະຄອນເຫວ້, ຫວຽດນາມ) ຕັ້ງແຕ່ວັນທີ 30 ມິຖຸນາ – 2 ກໍລະກົດ 2023.

ກອງປະຊຸມປີນີ້ຈະສຸມໃສ່ກ່ຽວກັບສຸຂະພາບຈິດ; ສິ່ງແວດລ້ອມ ແລະ ອາຊີບທາງດ້ານສຸຂະພາບ - ສຸຂະພາບໜຶ່ງດຽວ-ນິເວດສຸຂະພາບ (One Health- Eco Health); ໂພຊະນາການ ແລະ ຄວາມປອດໄພດ້ານອາຫານ; ການລະບາດຂອງພະຍາດຕິດຕໍ່ ແລະ ບໍ່ຕິດຕໍ່; ສຸຂະພາບຈະເລີນພັນ; ຄວາມສະຫຼາດທາງດ້ານສຸຂະພາບ ແລະ ການສົ່ງເສີມສຸຂະພາບ; ການຈັດການບໍລິການສຸຂະພາບ ແລະ ການດູແລສຸຂະພາບ; ເສດຖະກິດສາທາລະນະສຸກ ແລະ ເຕັກໂນໂລຢີດ້ານສຸຂະພາບ.

**ການຮັບເອົາບົດຄັດຫຍໍ້ ແມ່ນ ຮອດວັນທີ 31 ມີນາ 2023 !**

ລາຍລະອຽດເພີ່ມເຕີມ ແມ່ນເບິ່ງໃນ: **gms13-vietnam.org**

## ຜົນສຳເລັດ ຂອງ ສຳມະນາອອນໄລ

ເລີ່ມຕັ້ງແຕ່ເດືອນຕຸລາ 2022 ສຳມະນາປະຈຳເດືອນກ່ຽວກັບການຄົ້ນຄວ້າດ້ານໂພຊະນາການ ໄດ້ຈັດຂຶ້ນໂດຍ ສູນໂພຊະນາການ ມີຜູ້ເຂົ້າຮ່ວມຫຼາຍກວ່າ 150 ຄົນ ແລະ ເພີ່ມຂຶ້ນທຸກຄັ້ງ.

ທ່ານສາມາດເຂົ້າເຖິງບົດຮຽນ ສຳມະນາທີ່ທ່ານ ທີ່ທ່ານສົນໃຈໄດ້ຜ່ານທາງຊ່ອງຢູທູບ ANRCB ພວກເຮົາດາວໂຫຼດໄວ້ທັງພາສາລາວ ແລະ ອັງກິດ ໃນສຳມະນາຜ່ານມາ ມີຫຼາຍຫົວຂໍ້ທີ່ໜ້າສົນໃຈ ໂດຍສະເພາະແມ່ນ: ການປະເມີນ ແລະ ຜົນກະທົບ ຂອງ ການຂາດທາດເຫຼັກ ແລະ ພາວະເລືອດຈາງ ຄວາມເຂົ້າໃຈຮູບແບບຄວາມຫຼາກຫຼາຍຂອງອາຫານໃນປະເທດເນປານ, ສະພາບແວດລ້ອມຂອງອາຫານ ແລະ ຕົວຂັບເຄື່ອນໃນການບໍລິໂພກ, ປັດໃຈທາງສັງຄົມກັບຜົນໄດ້ຮັບທາງດ້ານໂພຊະນາການ, ແລະ ອາຫານປອດໄພ. ສຳມະນາຄັ້ງຕໍ່ໄປ ແມ່ນຫົວຂໍ້ **"ໂພຊະນາການ ແລະ ພັດທະນາການ ຂອງເດັກ ໃນປະເທດ ຕັງຊາເນຍ"** ຈະຈັດຂຶ້ນໃນເວລາ 9 ໂມງເຊົ້າ ຂອງວັນທີ 5 ເມສາ 2023.



## ຂ່າວການຈັດຕັ້ງປະຕິບັດ

ເຄືອຂ່າຍອົງການຈັດຕັ້ງທາງສັງຄົມເພື່ອສົ່ງເສີມໂພຊະນາການ (SUN CSA) ແມ່ນເຄືອຂ່າຍ ຂອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ ທີ່ເຮັດວຽກຮ່ວມກັນເພື່ອປັບປຸງໂພຊະນາການໃນ ສປປ ລາວ.

ວັນທີ 22 ມີນາ 2023, SUN CSA Laos ໄດ້ແລກປ່ຽນຜົນການຄົ້ນຄວ້າກ່ຽວກັບ "ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ໃນສະພາບການທີ່ລາຄາອາຫານເພີ່ມຂຶ້ນ ໃນ ສປປ ລາວ" ກັບກຸ່ມວິຊາການຂອງຕົນເພື່ອເຜີຍແຜ່ຜົນ ຂອງການສຳຫຼວດ ໃນກອງປະຊຸມໃຫຍ່ປະຈຳປີ SUN CSA ທີ່ຈະຈັດຂຶ້ນໃນວັນທີ 29 ມີນາ 2023. ການຄົ້ນຄວ້າດັ່ງກ່າວຄວາມພະຍາຍາມຮ່ວມກັນຂອງ 13 ອົງການພາຍໃນເຄືອຂ່າຍ SUN CSA ແລະ ເກັບກຳແບບສອບຖາມຫຼາຍກວ່າ 1000 ສະບັບຈາກຊຸມຊົນໃນທົ່ວປະເທດ. ບົດລາຍງານແມ່ນມີຈຸດປະສົງເພື່ອຊ່ວຍຊີ້ໃຫ້ເຫັນກ່ຽວກັບບັນຫາປະຈຸບັນທີ່ຄອບຄົວແລະຊຸມຊົນກຳລັງປະເຊີນຢູ່.

ບົດລາຍງານສາມາດເບິ່ງໄດ້ຢູ່ໃນເວັບໄຊທ໌ SUN CSA
**suncsalaos.org**